**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 562 /ລບ

ນະຄອນຫຼວງວຽງຈັນ, ລົງວັນທີ 16 / 09 / 25

# ດຳລັດ
# ວ່າດ້ວຍການເອົາເດັກເປັນລູກລ້ຽງ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018;
- ອີງຕາມ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບເລກທີ 43/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ໜັງສືສະເໜີຂອງກະຊວງຍຸຕິທຳ ສະບັບເລກທີ 1091/ກຍ, ລົງວັນທີ 08 ສິງຫາ 2025.

## ລັດຖະບານ ອອກດຳລັດ:
## ພາກທີI
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານເອົາເດັກເປັນລູກລ້ຽງ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ຮັບປະກັນໃຫ້ວຽກງານເອົາເດັກເປັນລູກລ້ຽງ ມີ ປະສິດທິພາບ, ປະສິດທິຜົນ ປະກອບ ສ່ວນເຂົ້າໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນສູງສຸດຂອງເດັກ.

**ມາດຕາ 2 ການເອົາເດັກເປັນລູກລ້ຽງ**

ການເອົາເດັກເປັນລູກລ້ຽງ ແມ່ນ ການຮັບເອົາເດັກຂອງຜູ້ອື່ນເປັນລູກລ້ຽງ ຂອງຕົນ ຢູ່ພາຍໃນ ຫຼື ຕ່າງປະເທດ ໂດຍຜ່ານຂັ້ນຕອນທີ່ຖືກຕ້ອງ ຊຶ່ງພາໃຫ້ເກີດສິດ ແລະ ພັນທະທາງຄອບຄົວ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລູກລ້ຽງ** ໝາຍເຖິງ ເດັກທີ່ໄດ້ຮັບອະນຸຍາດໃຫ້ເປັນລູກລ້ຽງ ຂອງບຸກຄົນອື່ນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. **ເດັກ** ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດປີ;

3. **ຜູ້ປົກຄອງເດັກ** ໝາຍເຖິງ ຜູ້ທີ່ມີຄວາມຮັບຜິດຊອບຕໍ່ເດັກ ຄືກັນກັບພໍ່ແມ່ຂອງເດັກ;

4. **ພໍ່ລ້ຽງ ແມ່ລ້ຽງ** ໝາຍເຖິງ ພົນລະເມືອງລາວ ຫຼື ຄົນຕ່າງດ້າວ, ຄົນຕ່າງປະເທດ, ທີ່ໄດ້ຮັບອະນຸຍາດຈາກອົງ ການທີ່ມີສິດອຳນາດກ່ຽວຂ້ອງ ໃຫ້ເອົາເດັກເປັນລູກລ້ຽງ ຂອງຕົນ;

5. **ເດັກທີ່ຂາດການເບິ່ງແຍງລ້ຽງດູ** ໝາຍເຖິງ ເດັກທີ່ຖືກປະລະ,ປະຖິ້ມ,ກຳພ້າ,ກຳພອຍ ທີ່ບໍ່ມີຜູ້ເບິ່ງແຍງລ້ຽງດູ;

6. **ເດັກພິເສດ** ໝາຍເຖິງ ເດັກທີ່ປະສົບກັບບັນຫາທາງດ້ານພຶດຕິກຳ ສະແດງອອກ ບໍ່ປົກກະຕິ, ພິການທາງດ້ານຮ່າງກາຍ, ມັນສະໝອງ ຫຼື ໄດ້ຮັບຜົນກະທົບທາງຈິດໃຈ;

7. **ຄົນຕ່າງດ້າວ** ໝາຍເຖິງ ບຸກຄົນທີ່ມີສັນຊາດອື່ນ ແຕ່ເຂົ້າມາຕັ້ງຖິ່ນຖານ, ອາໄສ ຢູ່ ສປປ ລາວ ຍາວນານ, ຖືບັດຕ່າງດ້າວ ແລະ ລັດຖະບານ ຂອງຄົນຕ່າງດ້າວນັ້ນ ກໍຍັງຮັບຮູ້ຢ່າງເປັນທາງການຢູ່;

8. **ຄົນຕ່າງປະເທດ** ໝາຍເຖິງ ບຸກຄົນທີ່ມີສັນຊາດອື່ນ ຊຶ່ງເຂົ້າມາ ສປປ ລາວ ຊົ່ວຄາວ ຫຼື ຍາວນານ ເພື່ອປະຕິບັດໜ້າທີ່ໃດໜຶ່ງ ເມື່ອໝົດກຳນົດແລ້ວ ກໍກັບຄືນ;

9. **ນັກສັງຄົມສົງເຄາະ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການອະນຸຍາດຈາກລັດ ເພື່ອໃຫ້ການຊ່ວຍເຫຼືອແກ່ຄອບຄົວ ແລະ ເດັກ ກ່ອນ ແລະ ຫຼັງການເອົາເດັກເປັນລູກລ້ຽງ.

### ມາດຕາ 4 ຫຼັກການ ກ່ຽວກັບວຽກງານເອົາເດັກເປັນລູກລ້ຽງ

ວຽກງານເອົາເດັກເປັນລູກລ້ຽງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຮັບປະກັນ ສິດ ແລະ ຜົນປະໂຫຍດອັນສູງສຸດຂອງເດັກ;
3. ໃຫ້ຖືເອົາການເອົາເດັກເປັນລູກລ້ຽງ ຢູ່ພາຍໃນປະເທດ ເປັນບູລິມະສິດ;
4. ຮັບປະກັນ ຄວາມໂປ່ງໃສ, ວ່ອງໄວ ແລະ ຖືກຕ້ອງ ຕາມຂັ້ນຕອນ;
5. ຮັບປະກັນ ການປະສານສົມທົບ ລະຫວ່າງ ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 5 ພັນທະກ່ຽວກັບວຽກງານເອົາເດັກເປັນລູກລ້ຽງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ພົບ ຫຼື ຮູ້ເຫັນ ເດັກ ທີ່ຂາດການເບິ່ງແຍງລ້ຽງດູ, ຖືກປະລະ, ປະຖິ້ມ, ກຳພ້າ, ກຳພອຍ, ບໍ່ມີຜູ້ປົກຄອງໃຫ້ການເບິ່ງແຍງລ້ຽງດູ ຫຼື ມີການໃຊ້ຄວາມຮຸນແຮງຕໍ່ເດັກໃນຄອບຄົວ, ມີການຂູດຮີດເດັກ ຕ້ອງໃຫ້ການຊ່ວຍເຫຼືອ, ແຈ້ງ ຫຼື ລາຍງານເຫດການດັ່ງກ່າວ ຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ.

### ມາດຕາ 6 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານເອົາເດັກເປັນລູກລ້ຽງຢູ່ ສປປ ລາວ.

ດຳລັດສະບັບນີ້ ບໍ່ນຳໃຊ້ສຳລັບການເອົາເດັກຕ່າງປະເທດ ເປັນລູກລ້ຽງຂອງພົນລະເມືອງລາວ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ເຕັກນິກວິຊາການ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານເອົາເດັກເປັນລູກລ້ຽງ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີ ປະສິດທິພາບ, ປະສິດທິຜົນ, ປະຕິບັດຕາມ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ການພິຈາລະນາກ່ອນການເອົາເດັກເປັນລູກລ້ຽງ

**ມາດຕາ 8 ການປະເມີນ ສະພາບເດັກ ແລະ ຄອບຄົວຂອງເດັກ**

ຄະນະຮັບຜິດຊອບພິຈາລະນາເອົາເດັກເປັນລູກລ້ຽງຂັ້ນເມືອງ ເປັນຜູ້ປະເມີນ ສະພາບເດັກ ແລະ ຄອບຄົວຂອງ ເດັກ ໂດຍອີງໃສ່ເງື່ອນໄຂ ດັ່ງນີ້:

1. ການປະເມີນສະພາບເດັກ:

1.1 ສະຖານະພາບຂອງເດັກ;

1.2 ດ້ານສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດ;

1.3 ຮັບຟັງຄຳເຫັນຂອງເດັກ ຖ້າວ່າເດັກຫາກມີອາຍຸ ເຈັດ ປີ ຂຶ້ນໄປ;

1.4 ເງື່ອນໄຂອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

2. ການປະເມີນຄອບຄົວຂອງເດັກ:

2.1 ຄວາມສາມາດໃນການໃຫ້ຄວາມອົບອຸ່ນ ເບິ່ງແຍງລ້ຽງດູ;

2.2 ສະພາບຄອບຄົວ;

2.3 ດ້ານສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດ;

2.4 ເງື່ອນໄຂອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 9 ການໃຫ້ຄຳປຶກສາແກ່ພໍ່ແມ່ ຫຼື ຜູ້ປົກຄອງເດັກ**

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຫຼື ນັກສັງຄົມສົງເຄາະ ເປັນຜູ້ໃຫ້ຄຳປຶກສາ ແກ່ພໍ່ແມ່ ຫຼື ຜູ້ປົກຄອງ ທີ່ໄດ້ເຫັນດີໃຫ້ເດັກເປັນລູກລ້ຽງ ກ່ຽວກັບຜົນສະທ້ອນຂອງການໃຫ້ເດັກເປັນລູກລ້ຽງ, ສິດ ແລະ ພັນທະ ທາງດ້ານກົດໝາຍ. ໃນການໃຫ້ຄຳປຶກສາດັ່ງກ່າວ ຕ້ອງເຮັດບົດບັນທຶກບັນຫາຕ່າງໆ ທີ່ໃຫ້ຄຳປຶກສາແກ່ ພໍ່ແມ່ ຫຼື ຜູ້ປົກຄອງ.

ຖ້າວ່າເດັກ ມີອາຍຸ ສິບປີ ຂຶ້ນໄປ ກໍຕ້ອງໄດ້ໃຫ້ຄຳປຶກສາ ເຊັ່ນດຽວກັນ.

**ມາດຕາ 10 ການເຫັນດີ ຂອງພໍ່ແມ່ ຫຼື ຜູ້ປົກຄອງ**

ການເຫັນດີ ຂອງພໍ່ແມ່ ຫຼື ຜູ້ປົກຄອງ ຂອງເດັກທີ່ຈະມອບເດັກໃຫ້ເປັນລູກລ້ຽງນັ້ນ ຕ້ອງເຮັດເປັນລາຍລັກອັກສອນ, ເຮັດຂຶ້ນດ້ວຍຄວາມບໍລິສຸດໃຈ ເພື່ອອະນາຄົດທີ່ດີຂອງເດັກ ໂດຍປາສະຈາກການບັງຄັບ ແລະ ສິ່ງຕອບແທນທາງດ້ານການເງິນ ຫຼື ດ້ານວັດຖຸ ໂດຍຊ້ອງໜ້າຄະນະກຳມະການປົກຄອງຕາແສງ ແລ້ວໃຫ້ສະເໜີຕໍ່ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນເມືອງ ເພື່ອພິຈາລະນາ.

ພໍ່ແມ່ ຫຼື ຜູ້ປົກຄອງ ທີ່ເຫັນດີໃຫ້ເດັກເປັນລູກລ້ຽງແລ້ວ ຫາກໄດ້ປ່ຽນໃຈ ໃຫ້ສະເໜີ ຢ່າງເປັນລາຍລັກອັກສອນຕໍ່ຄະນະກຳມະການປົກຄອງຕາແສງ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນເຫັນດີຢ່າງເປັນລາຍລັກອັກສອນເປັນຕົ້ນໄປ.

**ມາດຕາ 11 ການຂຶ້ນບັນຊີເດັກທີ່ຈະເປັນລູກລ້ຽງ**

ພາຍຫຼັງຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນເມືອງໄດ້ປະເມີນສະພາບເດັກ ແລະ ຄອບຄົວຂອງເດັກແລ້ວ ໃຫ້ແຈ້ງຕໍ່ຫ້ອງການຍຸຕິທຳຂັ້ນເມືອງ ຂຶ້ນບັນຊີຊື່ ແລະ ລາຍລະອຽດຂໍ້ມູນສ່ວນຕົວກ່ຽວກັບເດັກ ບັນທຶກໃສ່ໃນປຶ້ມທະບຽນ ແລະ/ຫຼື ບັນທຶກເຂົ້າໃນຖານຂໍ້ມູນ.

ກະຊວງຍຸຕິທຳເປັນຜູ້ກຳນົດກ່ຽວກັບບັນຊີຊື່ ແລະ ລາຍລະອຽດຂໍ້ມູນສ່ວນຕົວກ່ຽວກັບເດັກ.

## ພາກທີ III
## ການເອົາເດັກເປັນລູກລ້ຽງຂອງພົນລະເມືອງລາວ
## ໝວດທີ 1
## ເງື່ອນໄຂການເອົາເດັກເປັນລູກລ້ຽງ ຂອງພົນລະເມືອງລາວ

**ມາດຕາ 12 ເງື່ອນໄຂຂອງຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ**

ພົນລະເມືອງລາວ ທີ່ຮ້ອງຂໍເອົາເດັກເປັນລູກລ້ຽງ ມີ ເງື່ອນໄຂ ດັ່ງນີ້:

1. ມີອາຍຸ ແຕ່ ຊາວຫ້າປີ ປີຂຶ້ນໄປ ໃນເວລາເຮັດຄຳຮ້ອງຂໍເອົາເດັກເປັນລູກລ້ຽງ ແລະ ຕ້ອງມີອາຍຸຫ່າງກັບເດັກ ຢ່າງໜ້ອຍ ສິບແປດປີ;
2. ມີສະຕິສຳປະຊັນຍະສົມບູນ;
3. ມີຖານະທາງດ້ານເສດຖະກິດໝັ້ນຄົງ;
4. ມີທີ່ຢູ່ຖາວອນ;
5. ມີວຽກເຮັດງານທຳທີ່ແນ່ນອນ;
6. ມີສຸຂະພາບແຂງແຮງດີ, ບໍ່ເປັນພະຍາດຕິດຕໍ່ຮ້າຍແຮງ, ບໍ່ຕິດສິ່ງເສບຕິດ;
7. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ ແລະ ບໍ່ຖືກປົດສິດໃນການເປັນພໍ່ແມ່;
8. ຜ່ານການປະເມີນຈາກຄະນະຮັບຜິດຊອບ ພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນເມືອງ ແລະ ມີຊື່ຢູ່ໃນບັນຊີຂອງຜູ້ທີ່ມີເງື່ອນໄຂ ແລະ ມີຄວາມເໝາະສົມໃນການຮັບເດັກເປັນລູກລ້ຽງ;
9. ມີຄຳເຫັນດີຂອງ ຜົວ ຫຼື ເມຍ (ຖ້າມີ).

**ມາດຕາ 13 ເງື່ອນໄຂຂອງເດັກທີ່ຈະເປັນລູກລ້ຽງ**

ເດັກ ທີ່ຈະເປັນລູກລ້ຽງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຍັງບໍ່ເຖິງກະສຽນອາຍຸ ສິບແປດປີ;
2. ຂາດການເບິ່ງແຍງລ້ຽງດູ ຫຼື ບໍ່ສາມາດຢູ່ນຳຄອບຄົວ ຫຼື ບໍ່ສາມາດກັບຄືນສູ່ຄອບຄົວຂອງຕົນ;
3. ມີຄຳເຫັນດີຂອງເດັກໂດຍເຮັດເປັນລາຍລັກອັກສອນ ຖ້າວ່າເດັກຫາກມີອາຍຸ ເຈັດປີ ຂຶ້ນໄປ ຊຶ່ງຄຳເຫັນດີນັ້ນ ຕ້ອງບໍ່ມີການບັງຄັບ ຫຼື ຫຼອກລວງ;
4. ມີຄຳເຫັນດີຢ່າງເປັນລາຍລັກອັກສອນຂອງພໍ່ຄິງ ແມ່ຄິງຂອງເດັກ ຫຼື ຜູ້ປົກຄອງ ຫຼື ພາກສ່ວນທີ່ຮັບຜິດຊອບລ້ຽງດູເດັກ, ຄຳເຫັນດີນັ້ນຕ້ອງບໍ່ມີການບັງຄັບ;
5. ຜ່ານການປະເມີນ ແລະ ມີຄຳເຫັນຂອງຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ແລະ ມີຊື່ຢູ່ໃນບັນຊີຂອງເດັກທີ່ສາມາດເປັນລູກລ້ຽງ.

## ໝວດທີ 2
## ຂັ້ນຕອນການເອົາເດັກເປັນລູກລ້ຽງ ຂອງພົນລະເມືອງລາວ

**ມາດຕາ 14 ຂັ້ນຕອນການເອົາເດັກເປັນລູກລ້ຽງ**

ການເອົາເດັກເປັນລູກລ້ຽງພາຍໃນປະເທດ ມີຂັ້ນຕອນ ດັ່ງນີ້:

1. ການຍື່ນຄຳຮ້ອງ ແລະ ເອກະສານປະກອບ;
2. ການພິຈາລະນາຄຳຮ້ອງ;

3. ການອະນຸຍາດ;
4. ການຈົດທະບຽນການເອົາເດັກເປັນລູກລ້ຽງ.

**ມາດຕາ 15 ການຍື່ນຄໍາຮ້ອງ**

ພົນລະເມືອງລາວ ຜູ້ທີ່ມີຈຸດປະສົງຢາກເອົາເດັກເປັນລູກລ້ຽງ ໃຫ້ຍື່ນຄໍາຮ້ອງ ແລະ ເອກະສານປະກອບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 17 ຂອງດໍາລັດສະບັບນີ້ ຕໍ່ຫ້ອງການຍຸຕິທໍາ ຂັ້ນເມືອງ ໂດຍຜ່ານຄະນະກໍາມະການປົກຄອງຂັ້ນຕາແສງ ບ່ອນຜູ້ຮ້ອງຂໍ ຫຼື ເດັກ ອາໄສຢູ່.

**ມາດຕາ 16 ການຖອນຄໍາຮ້ອງ**

ຜູ້ທີ່ໄດ້ຍື່ນຄໍາຮ້ອງຂໍເອົາເດັກເປັນລູກລ້ຽງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 17 ຂອງດໍາລັດສະບັບນີ້ ສາມາດຖອນຄໍາຮ້ອງຂໍເອົາເດັກເປັນລູກລ້ຽງໄດ້ ແຕ່ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ແລະ ຮັບຜິດຊອບຄ່າໃຊ້ຈ່າຍ ທັງໝົດທີ່ເກີດຂຶ້ນ ຈາກການຮ້ອງຂໍນັ້ນ.

**ມາດຕາ 17 ເອກະສານປະກອບການຂໍເອົາເດັກເປັນລູກລ້ຽງ**

ຜູ້ທີ່ຈະເອົາເດັກເປັນລູກລ້ຽງຂອງພົນລະເມືອງລາວ ຕ້ອງມີເອກະສານປະກອບ ດັ່ງນີ້:

1. ຄໍາຮ້ອງຂໍເອົາເດັກເປັນລູກລ້ຽງ;
2. ຊີວະປະຫວັດຂອງຜູ້ຮ້ອງຂໍ;
3. ໃບຢັ້ງຢືນທີ່ຢູ່ ຫຼື ສໍາເນົາບັດປະຈໍາຕົວ;
4. ໃບແຈ້ງໂທດ;
5. ໃບຢັ້ງຢືນສຸຂະພາບ (ຮ່າງກາຍ ແລະ ສຸຂະພາບຈິດ);
6. ໃບຢັ້ງຢືນຖານະທາງດ້ານເສດຖະກິດ;
7. ໃບຢັ້ງຢືນການບໍ່ຖືກປົດສິດໃນການເປັນພໍ່ແມ່ (ຖ້າມີ);
8. ໃບຮັບປະກັນການລ້ຽງດູເດັກຂອງຜູ້ຮ້ອງຂໍ;
9. ສໍາເນົາປື້ມສໍາມະໂນຄົວ;
10. ເອກະສານອື່ນທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 18 ເອກະສານກ່ຽວກັບເດັກ**

ເອກະສານກ່ຽວກັບເດັກ ເພື່ອປະກອບໃນການພິຈາລະນາ ມີ ດັ່ງນີ້:

1. ຄໍາເຫັນຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ຫຼື ນັກສັງຄົມສົງເຄາະ ກ່ຽວກັບການປະເມີນເດັກ, ຄອບຄົວເດັກ;
2. ບົດບັນທຶກການໃຫ້ຄໍາປຶກສາແກ່ ພໍ່ ແມ່ ຫຼື ຜູ້ປົກຄອງເດັກ;
3. ໃບຢັ້ງຢືນການເກີດ;
4. ໃບຍິນຍອມ ຫຼື ຄໍາເຫັນຂອງພໍ່ແມ່ຄີງ ຫຼື ຜູ້ປົກຄອງ (ຖ້າມີ);
5. ໃບຢັ້ງຢືນສຸຂະພາບ (ຮ່າງກາຍ ແລະ ສຸຂະພາບຈິດ);
6. ຄໍາເຫັນດີຂອງເດັກ ຖ້າວ່າເດັກມີອາຍຸ ສິບປີ ຂຶ້ນໄປ;
7. ໃບຢັ້ງຢືນການເສຍຊີວິດຂອງພໍ່ ແມ່ ຫຼື ຜູ້ປົກຄອງ (ຖ້າມີ);
8. ຮູບຖ່າຍຂະໜາດ 3x4 ຈໍານວນ 3 ໃບ ບໍ່ເກີນ ສາມເດືອນ.

ການປະກອບເອກະສານກ່ຽວກັບເດັກ ຕາມທີ່ໄດ້ກໍານົດໄວ້ເທິງນີ້ ໃຫ້ປະກອບເອກະສານ ຕາມແຕ່ລະກໍລະນີຂອງເດັກ ເປັນຕົ້ນ ເດັກທີ່ຖືກປະລະ, ປະຖິ້ມ, ເດັກ ກໍາພ້າ, ກໍາພອຍ ທີ່ບໍ່ມີຜູ້ເບິ່ງແຍງລ້ຽງດູ.

**ມາດຕາ 19 ການພິຈາລະນາຄຳຮ້ອງ**

ພາຍຫຼັງໄດ້ຮັບຄຳສະເໜີ ຈາກຫ້ອງການຍຸຕິທຳຂັ້ນເມືອງແລ້ວ ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນເມືອງ ຕ້ອງພິຈາລະນາຄົ້ນຄ້ວາ ໃຫ້ບູລິມະສິດແກ່ຍາດໃກ້ຊິດຂອງເດັກ ຖ້າຫາກບໍ່ມີຍາດໃກ້ຊິດໃຫ້ພິຈາລະນາ ພົນລະເມືອງລາວ ທີ່ດຳລົງຊີວິດຢູ່ໃນປະເທດ, ພົນລະເມືອງລາວທີ່ດຳລົງຊີວິດຢູ່ຕ່າງປະເທດ, ພົນລະເມືອງຕ່າງປະເທດທີ່ດຳລົງຊີວິດຢູ່ພາຍໃນປະເທດ ແລະ ພົນລະເມືອງຕ່າງປະເທດ ທີ່ດຳລົງຊີວິດຢູ່ຕ່າງປະເທດ ຕາມລຳດັບ. ໃນການພິຈາລະນາດັ່ງກ່າວ ຕ້ອງໃຫ້ຄຳປຶກສາແກ່ຜູ້ຮ້ອງຂໍ, ປະເມີນຜູ້ຮ້ອງຂໍ, ຂຶ້ນທະບຽນບັນຊີຜູ້ທີ່ມີເງື່ອນໄຂຖືກຕ້ອງ ທີ່ສາມາດຮັບເອົາເດັກເປັນລູກລ້ຽງໄດ້, ຈັບຄູ່ເດັກກັບຜູ້ຮ້ອງຂໍ ຫຼື ຄອບຄົວທີ່ເໝາະສົມ ແລະ ການທົດລອງລ້ຽງດູ.

**ມາດຕາ 20 ການໃຫ້ຄຳປຶກສາ**

ຄະນະຮັບຜິດຊອບການພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນເມືອງ ຫຼື ນັກສັງຄົມສົງເຄາະ ຕ້ອງໃຫ້ຄຳປຶກສາກ່ຽວກັບການເອົາເດັກເປັນລູກລ້ຽງ ແກ່ຜູ້ຮ້ອງຂໍ ເພື່ອຮັບປະກັນໃນການກະກຽມ ແລະ ຄວາມຮັບຜິດຊອບ ໃນການເອົາເດັກເປັນລູກລ້ຽງ, ການເບິ່ງແຍງລ້ຽງດູ, ສິດ ແລະ ພັນທະທາງດ້ານກົດໝາຍ. ການໃຫ້ຄຳປຶກສາ ສາມາດເຮັດໄດ້ອີກໃນເວລາຈັບຄູ່ເດັກ ກັບຜູ້ຮ້ອງຂໍ ຖ້າເຫັນວ່າ ມີຄວາມຈຳເປັນ ແລະ ເດັກຜູ້ນັ້ນ ເປັນເດັກພິເສດ ທີ່ຕ້ອງໄດ້ເອົາໃຈໃສ່ໃນການເບິ່ງແຍງລ້ຽງດູ.

ໃນການໃຫ້ຄຳປຶກສາ ຕ້ອງເຮັດບົດບັນທຶກບັນຫາຕ່າງໆ ທີ່ໄດ້ໃຫ້ຄຳປຶກສາແກ່ຜູ້ຮ້ອງຂໍ ເພື່ອປະກອບໃນການພິຈາລະນາ.

**ມາດຕາ 21 ການປະເມີນຜູ້ຮ້ອງຂໍ**

ຄະນະຮັບຜິດຊອບການພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນເມືອງ ຕ້ອງປະເມີນເງື່ອນໄຂຕ່າງໆ ຂອງຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ ຫຼື ປະສານສົມທົບກັບນັກສັງຄົມສົງເຄາະ ໃນກໍລະນີເຫັນວ່າມີຄວາມຈຳເປັນ ເພື່ອຮັບປະກັນວ່າ ຜູ້ຮ້ອງຂໍ ມີຄວາມເໝາະສົມໃນການຮັບເອົາເດັກເປັນລູກລ້ຽງ.

ໃນການປະເມີນ ຕ້ອງລົງເກັບກຳຂໍ້ມູນຕົວຈິງ ໂດຍອີງໃສ່ເງື່ອນໄຂດ້ານ ຄຸນສົມບັດ, ຄວາມສາມາດໃນການໃຫ້ຄວາມອົບອຸ່ນເບິ່ງແຍງລ້ຽງດູ, ສະຖານະພາບທາງດ້ານຄອບຄົວ, ດ້ານສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດ, ຖານະທາງດ້ານເສດຖະກິດ-ສັງຄົມ, ທີ່ພັກອາໄສ, ອາຊີບ, ລາຍຮັບ ແລະ ເງື່ອນໄຂອື່ນ ທີ່ເຫັນວ່າ ມີຄວາມຈຳເປັນ ພ້ອມທັງເຮັດບົດບັນທຶກ ການປະເມີນແຕ່ລະຄັ້ງ.

ພາຍຫຼັງສຳເລັດການປະເມີນແລ້ວ ໃຫ້ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນເມືອງ ເຮັດບົດລາຍງານ ແລະ ລົງຄຳເຫັນວ່າ ຈະຮັບ ຫຼື ປະຕິເສດ ຄຳຮ້ອງຂໍເອົາເດັກໄປເປັນລູກລ້ຽງແລ້ວ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນ ສາມວັນ ນັບແຕ່ວັນໄດ້ມີຄຳເຫັນ ເປັນຕົ້ນໄປ.

**ມາດຕາ 22 ການຂຶ້ນບັນຊີຜູ້ຮ້ອງຂໍ**

ຜູ້ຮ້ອງຂໍເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງລາວ ທີ່ຜ່ານການປະເມີນ ແລະ ມີເງື່ອນໄຂຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໃຫ້ຫ້ອງການຍຸຕິທຳຂັ້ນເມືອງ ຂຶ້ນບັນຊີ ແລະ ລາຍລະອຽດຂໍ້ມູນສ່ວນຕົວ, ຊີວະປະຫວັດຂອງຜູ້ຮ້ອງຂໍ ແລ້ວບັນທຶກໃສ່ໃນບັນຊີທະບຽນ ແລະ ຮັກສາທະບຽນໄວ້ ເພື່ອຈັດບູລິມະສິດຂອງຜູ້ຮ້ອງຂໍ.

**ມາດຕາ 23 ການຈັບຄູ່ ເດັກ ກັບຜູ້ຮ້ອງຂໍທີ່ເໝາະສົມ**

ການຈັບຄູ່ ເດັກ ກັບຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ ຂອງພົນລະເມືອງລາວ ໃຫ້ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນເມືອງ ເປັນຜູ້ຕົກລົງ ແລ້ວແຈ້ງຜູ້ຮ້ອງຂໍທີ່ເໝາະສົມທີ່ສຸດ ເພື່ອທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່.

**ມາດຕາ 24 ການທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່**

ພາຍຫຼັງທີ່ໄດ້ຮັບການແຈ້ງກ່ຽວກັບການທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່ແລ້ວ ຜູ້ຮ້ອງຂໍ ຕ້ອງສ້າງເງື່ອນໄຂ ແລະ ໂອກາດໃຫ້ເດັກໄດ້ຮັບການເບິ່ງແຍງລ້ຽງດູ, ປັບຕົວເຂົ້າກັບ ສະພາບແວດລ້ອມ, ຮີດຄອງປະເພນີ, ຊີວິດການເປັນຢູ່ ແລະ ຄວາມຈຳເປັນອື່ນ ກັບຄອບຄົວຕົນ. ການທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່ ມີກຳນົດ ສາມເດືອນ, ໃນກໍລະນີເດັກເປັນຍາດໃກ້ຊິດກັບຜູ້ຮ້ອງຂໍ ການທົດລອງນັ້ນ ມີກຳນົດ ໜຶ່ງເດືອນ.

ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ຫຼື ນັກສັງຄົມສົງເຄາະ ເປັນຜູ້ຕິດຕາມຊຸກຍູ້ການທົດລອງຈັດເດັກເຂົ້າກັບຄອບຄົວໃໝ່ ໂດຍມີການປະສານສົມທົບກັບຄະນະກຳມະການປົກຄອງຕາແສງ ຢ່າງໜ້ອຍໜຶ່ງເທື່ອຕໍ່ເດືອນ ແລ້ວເຮັດບົດລາຍງານ ເພື່ອປະກອບການພິຈາລະນາ.

ໃນກໍລະນີເດັກບໍ່ສາມາດເຂົ້າກັບຄອບຄົວໃໝ່ໄດ້, ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຕ້ອງຢຸດຕິການທົດລອງ ແລ້ວເອົາເດັກກັບຄືນ ເພື່ອຊອກຫາທາງເລືອກໃໝ່ທີ່ເໝາະສົມສຳລັບເດັກ.

ໃນການທົດລອງຈັດເດັກເຂົ້າກັບຄອບຄົວໃໝ່ ຕ້ອງໄດ້ຟັງຄຳຄິດຄຳເຫັນຂອງເດັກ ຕາມໄວ, ອາຍຸ ແລະ ຄວາມສາມາດຈຳແນກຄວາມຖືກ, ຜິດ ຂອງເດັກ.

**ມາດຕາ 25 ການອະນຸຍາດ**

ພາຍຫຼັງສຳເລັດການທົດລອງລ້ຽງດູແລ້ວ ໃຫ້ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນເມືອງ ສະເໜີອົງການປົກຄອງທ້ອງຖິ່ນຂັ້ນເມືອງ ພິຈາລະນາອະນຸຍາດການເອົາເດັກເປັນລູກລ້ຽງ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີ ເປັນຕົ້ນໄປ.

**ມາດຕາ 26 ການຈົດທະບຽນການເອົາເດັກເປັນລູກລ້ຽງ**

ພາຍຫຼັງອົງການປົກຄອງທ້ອງຖິ່ນຂັ້ນເມືອງ ອະນຸຍາດການເອົາເດັກເປັນລູກລ້ຽງ ໃຫ້ຫ້ອງການຍຸຕິທຳຂັ້ນເມືອງ ຈົດທະບຽນ ແລະ ອອກໃບຢັ້ງຢືນການເອົາເດັກເປັນລູກລ້ຽງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ ແລ້ວແຈ້ງໃຫ້ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ.

## ພາກທີ IV
## ການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ
### ໝວດທີ 1
### ເງື່ອນໄຂການເອົາເດັກເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ

**ມາດຕາ 27 ເງື່ອນໄຂຂອງຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ**

ພົນລະເມືອງຕ່າງປະເທດ ທີ່ຮ້ອງຂໍເອົາເດັກເປັນລູກລ້ຽງຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີອາຍຸ ສາມສິບປີຂຶ້ນໄປ ແຕ່ບໍ່ໃຫ້ເກີນ ຫ້າສິບປີ ໃນເວລາເຮັດຄຳຮ້ອງ;
2. ມີສະຕິສຳປະຊັນຍະສົມບູນ;
3. ມີຖານະທາງດ້ານເສດຖະກິດໝັ້ນຄົງ;
4. ມີທີ່ຢູ່ຖາວອນ;
5. ມີວຽກເຮັດງານທຳທີ່ແນ່ນອນ;
6. ມີສຸຂະພາບແຂງແຮງດີ, ບໍ່ເປັນພະຍາດຕິດຕໍ່ຮ້າຍແຮງ, ບໍ່ຕິດສິ່ງເສບຕິດ;
7. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ ແລະ ບໍ່ຖືກປົດສິດໃນການເປັນພໍ່ແມ່;

8. ໄດ້ຜ່ານການປະເມີນຈາກໜ່ວຍງານທີ່ຮັບຜິດຊອບ ຂອງປະເທດຜູ້ຮ້ອງຂໍ;
9. ມີຄຳເຫັນດີຂອງ ຜົວ ຫຼື ເມຍ.

**ມາດຕາ 28 ເງື່ອນໄຂຂອງເດັກເປັນລູກລ້ຽງ**

ເດັກ ທີ່ຈະເປັນລູກລ້ຽງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີອາຍຸບໍ່ເກີນ ແປດປີ;
2. ຂາດການເບິ່ງແຍງລ້ຽງດູ ຫຼື ບໍ່ສາມາດຢູ່ນຳຄອບຄົວ ຫຼື ບໍ່ສາມາດກັບຄືນສູ່ຄອບຄົວຂອງຕົນ;
3. ມີຄຳເຫັນດີຢ່າງເປັນລາຍລັກອັກສອນຂອງພໍ່ຄີງ ແມ່ຄີງຂອງເດັກ;
4. ຜ່ານການປະເມີນ ແລະ ມີຄຳເຫັນຂອງຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ແລະ ມີຊື່ຢູ່ໃນບັນຊີຂອງເດັກທີ່ສາມາດເປັນລູກລ້ຽງ;

ໃນກໍລະນີ ທີ່ເດັກ ມີອາຍຸເກີນ ແປດປີ ແຕ່ເປັນຍາດໃກ້ຊິດກັບຜູ້ຮ້ອງຂໍ ໃຫ້ພິຈາລະນາເປັນກໍລະນີພິເສດ.

## ໝວດທີ 2
## ຂັ້ນຕອນການເອົາເດັກເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ

**ມາດຕາ 29 ຂັ້ນຕອນການເອົາເດັກເປັນລູກລ້ຽງ**

ການເອົາເດັກເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ມີຂັ້ນຕອນ ດັ່ງນີ້:

1. ການຍື່ນ ຄຳຮ້ອງຂໍ ແລະ ເອກະສານປະກອບ;
2. ການພິຈາລະນາຄຳຮ້ອງ;
3. ການອະນຸຍາດ;
4. ການຈົດທະບຽນການເອົາເດັກເປັນລູກລ້ຽງ.

**ມາດຕາ 30 ການຍື່ນຄຳຮ້ອງ**

ຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ອາໄສ ຢູ່ ສປປ ລາວ ມີຈຸດປະສົງຂໍເອົາເດັກໄປເປັນລູກລ້ຽງ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງຍຸຕິທຳ, ໂດຍຜ່ານກົມກົງສຸນ ກະຊວງການຕ່າງປະເທດ. ໃນກໍລະນີຜູ້ຮ້ອງຂໍດຳລົງຊີວິດຢູ່ຕ່າງປະເທດ ໃຫ້ຍື່ນຄຳຮ້ອງຜ່ານສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

ໃນກໍລະນີພົນລະເມືອງຕ່າງປະເທດ ທີ່ມີຜົວ ຫຼື ເມຍ ຖືສັນຊາດລາວ ໃຫ້ຍື່ນຄຳຮ້ອງຂໍເອົາເດັກໄປເປັນລູກລ້ຽງ ໃນນາມພົນລະເມືອງຕ່າງປະເທດ.

**ມາດຕາ 31 ການຖອນຄຳຮ້ອງ**

ຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ໄດ້ຍື່ນຄຳຮ້ອງຂໍເອົາເດັກເປັນລູກລ້ຽງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 30 ຂອງດຳລັດສະບັບນີ້ ສາມາດຖອນຄຳຮ້ອງ ແຕ່ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ແລະ ຮັບຜິດຊອບຄ່າໃຊ້ຈ່າຍ ທັງໝົດທີ່ເກີດຈາກການຮ້ອງຂໍນັ້ນ.

**ມາດຕາ 32 ເອກະສານປະກອບການຂໍເອົາເດັກເປັນລູກລ້ຽງ**

ເອກະສານປະກອບການຂໍເດັກເປັນລູກລ້ຽງ ຂອງຄົນຕ່າງປະເທດ ມີ ດັ່ງນີ້:

1. ຄຳຮ້ອງຂໍເດັກເປັນລູກລ້ຽງ;
2. ຊີວະປະຫວັດຂອງຜູ້ຮ້ອງຂໍ;

3. ໃບຢັ້ງຢືນທີ່ຢູ່;

4. ໃບແຈ້ງໂທດ;

5. ໃບຢັ້ງຢືນສຸຂະພາບ (ຮ່າງກາຍ ແລະ ສຸຂະພາບຈິດ);

6. ໃບຢັ້ງຢືນການເຮັດວຽກ;

7. ໃບຢັ້ງຢືນຖານະທາງດ້ານເສດຖະກິດ;

8. ໃບຢັ້ງຢືນການແຕ່ງດອງ (ຖ້າມີ);

9. ສຳເນົາໜັງສືຜ່ານແດນ ສຳລັບຄົນຕ່າງປະເທດທີ່ອາໄສ ຢູ່ຕ່າງປະເທດ;

10. ສຳເນົາໜັງສືຜ່ານແດນ, ບັດອະນຸຍາດພັກເຊົາ ແລະ ບັດອະນຸຍາດເຮັດວຽກ ສຳລັບຄົນຕ່າງປະເທດທີ່ອາໄສ ຢູ່ ສປປ ລາວ;

11. ຄຳຕົກລົງໃຫ້ເອົາເດັກເປັນລູກລ້ຽງ ຂອງອົງການທີ່ມີສິດອຳນາດ ຂອງປະເທດຜູ້ຮ້ອງຂໍ;

12. ຄຳເຫັນປະເມີນຜູ້ຮ້ອງຂໍຂອງອົງການກ່ຽວຂ້ອງປະເທດຜູ້ຮ້ອງຂໍ;

13. ຄຳເຫັນຂອງສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ;

14. ຮູບຖ່າຍຂະໜາດ 3x4 ຈຳນວນ 3 ໃບ ບໍ່ເກີນ ສາມ ເດືອນ;

15. ໃບເກັບເງິນຄ່າທຳນຽມ;

16. ເອກະສານອື່ນທີ່ເຫັນວ່າຈຳເປັນ.

ສຳລັບຄົນຕ່າງດ້າວ ການປະກອບເອກະສານ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດສະບັບນີ້ ແລະ ຕ້ອງມີຄຳເຫັນຂອງສະຖານທູດ ຫຼື ສະຖານກົງສຸນ ຂອງປະເທດ ຜູ້ຮ້ອງຂໍ ກ່ຽວກັບການເອົາເດັກເປັນລູກລ້ຽງ.

ທຸກເອກະສານ ຕ້ອງເຮັດເປັນພາສາລາວ, ຖ້າເອກະສານໃດ ຫາກເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ແລະ ມີການຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ.

**ມາດຕາ 33 ເອກະສານກ່ຽວກັບເດັກ**

ເອກະສານກ່ຽວກັບເດັກ ເພື່ອປະກອບໃນການພິຈາລະນາການເອົາເດັກເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ໃຫ້ປະຕິບັດຄືກັນກັບການປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງດຳລັດສະບັບນີ້.

**ມາດຕາ 34 ການພິຈາລະນາຄຳຮ້ອງ**

ພາຍຫຼັງໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ແລະ ໄດ້ກວດກາເງື່ອນໄຂຂອງຜູ້ຮ້ອງຂໍ ຖືກຕ້ອງ, ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 32 ແລະ 33 ຂອງດຳລັດສະບັບນີ້ແລ້ວ ໃຫ້ກະຊວງຍຸຕິທຳ ເປັນໃຈກາງປະສານສົມທົບກັບຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນສູນກາງ ເພື່ອພິຈາລະນາຄຳຮ້ອງຂໍເອົາເດັກໄປເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ໃຫ້ພິຈາລະນາ ພົນລະເມືອງຕ່າງປະເທດທີ່ດຳລົງຊີວິດຢູ່ພາຍໃນປະເທດ ແລະ ພົນລະເມືອງຕ່າງປະເທດ ທີ່ດຳລົງຊີວິດຢູ່ຕ່າງປະເທດ ຕາມລຳດັບ. ໃນການພິຈາລະນາດັ່ງກ່າວ ຕ້ອງໃຫ້ຄຳປຶກສາແກ່ຜູ້ຮ້ອງຂໍ, ປະເມີນຜູ້ຮ້ອງຂໍ, ຂຶ້ນທະບຽນບັນຊີຜູ້ທີ່ມີເງື່ອນໄຂຖືກຕ້ອງ ທີ່ສາມາດຮັບເອົາເດັກເປັນລູກລ້ຽງໄດ້, ຈັບຄູ່ເດັກກັບຜູ້ຮ້ອງຂໍ ຫຼື ຄອບຄົວທີ່ເໝາະສົມ ແລະ ການທົດລອງລ້ຽງດູ.

ໃນກໍລະນີຜູ້ຮ້ອງຂໍ ຫາກເປັນຍາດໃກ້ຊິດຂອງເດັກ, ເດັກພິເສດ, ອ້າຍເອື້ອຍນ້ອງຂອງເດັກ ທີ່ຈະໄປເປັນລູກລ້ຽງ ຊຶ່ງມີອາຍຸເກີນ ແປດປີ ຕ້ອງຄຳນຶງເຖິງຜົນປະໂຫຍດສູງສຸດຂອງເດັກ, ພິຈາລະນາເປັນກໍລະນີພິເສດ ໂດຍໃຫ້ບູລິມະສິດແກ່ຍາດໃກ້ຊິດ ແລະ ພິຈາລະນາຕາມບັນຊີຜູ້ຮ້ອງຂໍທີ່ມີເງື່ອນໄຂການຮັບເດັກເປັນລູກລ້ຽງຂອງຄົນຕ່າງປະເທດ.

**ມາດຕາ 35 ການໃຫ້ຄຳປຶກສາ**

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນແຂວງ ຫຼື ຂັ້ນສູນກາງ ຕ້ອງໃຫ້ຄຳປຶກສາກ່ຽວກັບການເອົາເດັກເປັນລູກລ້ຽງ ແກ່ຜູ້ຮ້ອງຂໍ ທີ່ເປັນຄົນຕ່າງດ້າວ, ຄົນຕ່າງປະເທດ ເພື່ອຮັບປະກັນ ການກະກຽມ ແລະ ຄວາມຮັບຜິດຊອບໃນການເອົາເດັກເປັນລູກລ້ຽງ, ການເບິ່ງແຍງລ້ຽງດູ, ສິດ ແລະ ພັນທະທາງດ້ານກົດໝາຍ. ການໃຫ້ຄຳປຶກສາ ຍັງສາມາດດຳເນີນໄດ້ອີກ ໃນເວລາຈັບຄູ່ເດັກກັບຜູ້ຮ້ອງຂໍ ຖ້າເຫັນວ່າມີຄວາມຈຳເປັນ ແລະ ເດັກຜູ້ນັ້ນ ເປັນເດັກພິເສດທີ່ຕ້ອງໃນການເບິ່ງແຍງລ້ຽງດູ.

ໃນການໃຫ້ຄຳປຶກສາ ໃຫ້ເຮັດເປັນພາສາລາວ, ສຳລັບຜູ້ທີ່ບໍ່ຮູ້ພາສາລາວນັ້ນ ຕ້ອງໄດ້ຜ່ານການແປ ໂດຍໃຫ້ຜູ້ຮ້ອງຂໍເອົາເດັກໄປເປັນລູກລ້ຽງນັ້ນ ຮັບຜິດຊອບຄ່າໃຊ້ຈ່າຍ ທັງໝົດ ແລະ ຕ້ອງເຮັດບົດບັນທຶກບັນຫາຕ່າງໆ ທີ່ໄດ້ໃຫ້ຄຳປຶກສາແກ່ຜູ້ຮ້ອງຂໍ ເພື່ອປະກອບໃນການພິຈາລະນາ.

**ມາດຕາ 36 ການປະເມີນຜູ້ຮ້ອງຂໍ**

ຄະນະຮັບຜິດຊອບການພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນແຂວງ ຕ້ອງປະເມີນເງື່ອນໄຂຕ່າງໆ ຂອງຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ ທີ່ເປັນຄົນຕ່າງດ້າວ, ຄົນຕ່າງປະເທດທີ່ອາໄສ ຢູ່ສປປ ລາວ, ສຳລັບຄົນຕ່າງປະເທດ ທີ່ອາໄສຢູ່ຕ່າງປະເທດ ແມ່ນອົງການທີ່ກ່ຽວຂ້ອງຂອງປະເທດຜູ້ຮ້ອງຂໍ ເປັນຜູ້ປະເມີນຜູ້ຮ້ອງຂໍ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໃນກໍລະນີເຫັນວ່າ ມີຄວາມຈຳເປັນ ເພື່ອຮັບປະກັນວ່າຜູ້ຮ້ອງຂໍມີຄວາມ ເໝາະສົມໃນການເອົາເດັກເປັນລູກລ້ຽງ.

ໃນການປະເມີນ ຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນແຂວງ ປະເມີນຜູ້ຮ້ອງຂໍ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 21, ວັກສອງ ຂອງດຳລັດສະບັບນີ້.

ພາຍຫຼັງສຳເລັດການປະເມີນແລ້ວ ໃຫ້ເຮັດບົດລາຍງານ ພາຍໃນກຳນົດເວລາ ຫ້າວັນລັດຖະການ ແລ້ວສົ່ງໃຫ້ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນສູນກາງ.

**ມາດຕາ 37 ການຂຶ້ນບັນຊີຜູ້ຮ້ອງຂໍ**

ຜູ້ຮ້ອງຂໍເອົາເດັກໄປເປັນລູກລ້ຽງ ທີ່ເປັນຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ຜ່ານການປະເມີນ ແລະ ມີເງື່ອນໄຂຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໃຫ້ກະຊວງຍຸຕິທຳ ຂຶ້ນບັນຊີ ແລະ ລາຍລະອຽດຂໍ້ມູນສ່ວນຕົວ, ຊີວະປະຫວັດຜູ້ຮ້ອງຂໍແລ້ວບັນທຶກໃສ່ໃນບັນຊີທະບຽນ ແລະ ຮັກສາທະບຽນໄວ້ ເພື່ອຈັດບູລິມະສິດຂອງຜູ້ຮ້ອງຂໍ.

**ມາດຕາ 38 ການຈັບຄູ່ເດັກ ກັບຜູ້ຮ້ອງຂໍທີ່ເໝາະສົມ**

ຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງ ຂັ້ນສູນກາງ ເປັນຜູ້ຕົກລົງ ກ່ຽວກັບການຈັບຄູ່ເດັກ ກັບຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງຂອງຄົນຕ່າງດ້າວ, ຄົນຕ່າງປະເທດທີ່ເໝາະສົມ.

ພາຍຫຼັງ ທີ່ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນສູນກາງ ຕົກລົງ ກ່ຽວກັບການຈັບຄູ່ເດັກແລ້ວ ໃຫ້ກະຊວງຍຸຕິທຳ ສະເໜີຕໍ່ກະຊວງການຕ່າງປະເທດ ເພື່ອແຈ້ງໃຫ້ຜູ້ຮ້ອງຂໍທີ່ ເໝາະສົມນັ້ນ ທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່.

**ມາດຕາ 39 ການທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່**

ພາຍຫຼັງທີ່ໄດ້ຮັບການແຈ້ງກ່ຽວກັບການທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່ແລ້ວ ຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ຕ້ອງສ້າງເງື່ອນໄຂ ແລະ ໂອກາດໃຫ້ເດັກໄດ້ຮັບການເບິ່ງແຍງລ້ຽງດູ, ສ້າງສາຍພົວພັນ, ປັບຕົວເຂົ້າກັບ ສະພາບແວດລ້ອມ, ຮີດຄອງປະເພນີ, ຊີວິດການເປັນຢູ່ ແລະ ຄວາມຈຳເປັນອື່ນ ກັບຄອບຄົວຕົນ. ການທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່ ມີກຳນົດ ຫົກເດືອນ.

ຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງ ຂັ້ນສູນກາງ ເປັນຜູ້ຕົກລົງໃຫ້ຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງ ຂັ້ນແຂວງ ຕິດຕາມ ຊຸກຍູ້ການເບິ່ງແຍງລ້ຽງດູ, ການດໍາລົງຊີວິດຂອງເດັກ ຢ່າງໜ້ອຍສອງເດືອນຕໍ່ເທື່ອ ພ້ອມທັງເຮັດບົດລາຍງານເພື່ອປະກອບການພິຈາລະນາ ການຂໍເອົາເດັກໄປເປັນລູກລ້ຽງຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ໂດຍມີການປະສານສົມທົບກັບ ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນເມືອງ ແລະ ຄະນະກໍາມະການປົກຄອງຕາແສງ.

ສໍາລັບການທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່ຂອງຄົນຕ່າງປະເທດທີ່ອາໄສຢູ່ຕ່າງປະເທດໃຫ້ທົດລອງລ້ຽງດູ ຢູ່ພາຍໃນປະເທດກ່ອນ ຢ່າງໜ້ອຍ ໜຶ່ງເດືອນ ໂດຍມີການຕິດຕາມ ແລະ ລາຍງານການເບິ່ງແຍງລ້ຽງດູ.

ການທົດລອງລ້ຽງດູທີ່ໄດ້ອະນຸຍາດໃຫ້ເດັກໄປອາໄສຢູ່ຕ່າງປະເທດ ນໍາຄອບຄົວຂອງຜູ້ຮ້ອງຂໍ ໃຫ້ສໍານັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈໍາປະເທດຜູ້ຮ້ອງຂໍ ເປັນຜູ້ປະສານສົມທົບໄປຍັງອົງການທີ່ກ່ຽວຂ້ອງຂອງປະເທດນັ້ນ ເພື່ອຂໍການຊ່ວຍເຫຼືອໃນການຕິດຕາມ ແລະ ລາຍງານກ່ຽວກັບການເບິ່ງແຍງລ້ຽງດູ. ສໍາລັບການອະນຸຍາດໃຫ້ເດັກໄປທົດລອງລ້ຽງດູຢູ່ຕ່າງປະເທດນັ້ນ ຜູ້ຮ້ອງຂໍຕ້ອງມີສິ່ງຄໍ້າປະກັນໄວ້ ເພື່ອຮັບປະກັນການເບິ່ງແຍງລ້ຽງດູເດັກ, ການພາເດັກກັບຄືນມາ ສປປ ລາວ ພາຍຫຼັງໝົດກໍານົດເວລາການທົດລອງລ້ຽງດູ ເພື່ອພິຈາລະນາຕົກລົງ ແລະ ຈົດທະບຽນການເອົາເດັກໄປເປັນລູກລ້ຽງ.

ໃນກໍລະນີເດັກບໍ່ສາມາດເຂົ້າກັບຄອບຄົວໃໝ່ໄດ້ ຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງ ຂັ້ນສູນກາງ ຕ້ອງຢຸດຕິການທົດລອງ ແລ້ວໃຫ້ສໍານັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈໍາຢູ່ປະເທດນັ້ນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເອົາເດັກກັບຄືນມາຢູ່ພາຍໃຕ້ການຄຸ້ມຄອງຕົນ.

ການຕິດຕາມການເບິ່ງແຍງລ້ຽງດູ ຕ້ອງຟັງຄໍາເຫັນຂອງເດັກ ຕາມໄວອາຍຸ ແລະ ຄວາມສາມາດໃນການຈໍາແນກຄວາມຖືກ, ຜິດ ຂອງເດັກ.

**ມາດຕາ 40 ການອະນຸຍາດ**

ພາຍຫຼັງສໍາເລັດການທົດລອງລ້ຽງດູແລ້ວ ໃຫ້ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເປັນຜູ້ນໍາສະເໜີນາຍົກລັດຖະມົນຕີ ພິຈາລະນາກ່ຽວກັບການຂໍເອົາເດັກເປັນລູກລ້ຽງ ຕາມການສະເໜີ ຂອງກະຊວງຍຸຕິທໍາ ພາຍໃນກໍານົດເວລາ ສາມເດືອນ ນັບແຕ່ວັນໄດ້ຮັບໜັງສືສະເໜີ ເປັນຕົ້ນໄປ.

**ມາດຕາ 41 ການຈົດທະບຽນການເອົາເດັກໄປເປັນລູກລ້ຽງ**

ພາຍຫຼັງນາຍົກລັດຖະມົນຕີ ອະນຸຍາດການເອົາເດັກເປັນລູກລ້ຽງແລ້ວ ໃຫ້ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ແຈ້ງໃຫ້ກະຊວງຍຸຕິທໍາ ຈົດທະບຽນ ແລະ ອອກໃບຢັ້ງຢືນການເອົາເດັກເປັນລູກລ້ຽງ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບການແຈ້ງ ເປັນຕົ້ນໄປ ແລ້ວແຈ້ງໃຫ້ ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ.

## ພາກທີ V
## ຜົນຂອງການເປັນລູກລ້ຽງ ແລະ ການສິ້ນສຸດການເປັນລູກລ້ຽງ

**ມາດຕາ 42 ຜົນຂອງການເປັນລູກລ້ຽງ**

ຜົນຂອງການເປັນລູກລ້ຽງ ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ໃຫ້ປະຕິບັດ ຕາມມາດຕາ 205 ຂອງປະມວນກົດໝາຍແພ່ງ.

ພາຍຫຼັງທີ່ໄດ້ຮັບການຈົດທະບຽນການເອົາເດັກເປັນລູກລ້ຽງແລ້ວ ໃຫ້ພໍ່ລ້ຽງ ແມ່ລ້ຽງທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ ເອົາຂໍ້ມູນກ່ຽວກັບເດັກ ໄປຂຶ້ນສຳມະໂນຄົວນຳຄອບຄົວຂອງຕົນ ຫຼື ເອກະສານອື່ນທີ່ກ່ຽວຂ້ອງ ກັບຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບການ ແລ້ວໃຫ້ຂະແໜງການປ້ອງກັນຄວາມສະຫງົບ ລົບຊື່ອອກຈາກສຳມະໂນຄົວທີ່ເຄີຍໄດ້ຂຶ້ນມາກ່ອນ,

ສຳລັບ ພໍ່ລ້ຽງ, ແມ່ລ້ຽງ ທີ່ເປັນຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ຫຼື ຕ່າງປະເທດ ໃຫ້ແຈ້ງຕໍ່ຂະແໜງການປ້ອງກັນຄວາມສະຫງົບ ເພື່ອລົບຊື່ເດັກ ອອກສຳມະໂນຄົວເດີມ ແລະ ສາມາດນຳໃຊ້ຂໍ້ມູນກ່ຽວກັບເດັກໄປເຮັດໜັງສືຜ່ານແດນ ຫຼື ເອກະສານ ທີ່ກ່ຽວຂ້ອງ.

**ມາດຕາ 43 ການຮັກສາຄວາມລັບ**

ພໍ່ລ້ຽງ ແມ່ລ້ຽງ ແລະ ບຸກຄົນອື່ນ ຕ້ອງຮັກສາຄວາມລັບ ເດັກທີ່ເປັນລູກລ້ຽງໄວ້ ເວັ້ນເສຍແຕ່ມີການເຫັນດີຂອງພໍ່ລ້ຽງ ແມ່ລ້ຽງ ຫຼື ເດັກ ຊຶ່ງເດັກ ສາມາດຮັບຮູ້ໄດ້ ຕາມໄວ ອາຍຸ ແລະ ຄວາມສາມາດຂອງເດັກເອງ.

ໃນກໍລະນີການເອົາເດັກໄປເປັນລູກລ້ຽງ ລະຫວ່າງ ຍາດພີ່ນ້ອງຂອງເດັກເອງ ພໍ່ແມ່ ທີ່ໃຫ້ກຳເນີດ ແລະ ພໍ່ລ້ຽງ ແມ່ລ້ຽງ ອາດຈະຕົກລົງໃຫ້ເປີດເຜີຍຂໍ້ມູນແກ່ສະມາຊິກຄອບຄົວ ກໍໄດ້.

ເດັກ ອາດສາມາດເຂົ້າເຖິງຂໍ້ມູນກ່ຽວກັບຕົ້ນກຳເນີດຂອງຕົນໄດ້ ເມື່ອມີອາຍຸ ສິບແປດປີ ຫຼື ພໍ່ແມ່ເກີດຂອງເດັກ ອາດຈະຂໍຮ້ອງໃຫ້ເປັນຄວາມລັບ ບໍ່ໃຫ້ເປີດເຜີຍແກ່ເດັກທີ່ເປັນລູກລ້ຽງ ຮູ້ຕະຫຼອດໄປ ກໍໄດ້.

**ມາດຕາ 44 ສິດຂອງພໍ່ລ້ຽງ ແມ່ລ້ຽງ**

ພໍ່ລ້ຽງ ແມ່ລ້ຽງ ມີສິດ ຄືກັນກັບ ພໍ່ຄີງ ແມ່ຄີງ ໃນການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງລູກລ້ຽງ ແລະ ສຶກສາອົບຮົມໃຫ້ເປັນຄົນດີ ຂອງ ຄອບຄົວ, ສັງຄົມ, ປະເທດຊາດ ແລະ ມີສິດ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

**ມາດຕາ 45 ພັນທະຂອງພໍ່ລ້ຽງ ແມ່ລ້ຽງ**

ພໍ່ລ້ຽງ ແມ່ລ້ຽງ ມີ ພັນທະ ດັ່ງນີ້:

1. ເບິ່ງແຍງລ້ຽງດູລູກລ້ຽງໃຫ້ເຕີບໃຫຍ່, ເອົາໃຈໃສ່ຮັກສາຄວາມປອດໄພ, ຊຸກຍູ້ ແລະ ສົ່ງເສີມການພັດທະນາຢ່າງຮອບດ້ານ ແລະ ປົກປ້ອງລູກຈາກໄພອັນຕະລາຍ ເປັນຕົ້ນ ການໃຊ້ຄວາມຮຸນແຮງ, ການສວຍໃຊ້ເດັກ, ການປ່ອຍປະລະເລີຍ, ການກົດຂີ່ຂູດຮີດທຸກຮູບແບບ;
2. ຮັບປະກັນໃຫ້ລູກລ້ຽງໄດ້ຮັບການຮັກສາສຸຂະພາບຢ່າງເຕັມສ່ວນ;
3. ສຶກສາອົບຮົມລູກລ້ຽງໃຫ້ເປັນຄົນດີຂອງຄອບຄົວ, ສັງຄົມ;
4. ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ລູກລ້ຽງ ໄດ້ຮັບການສຶກສາທີ່ດີ ຕາມຄວາມສາມາດຂອງລູກລ້ຽງ;
5. ເປັນຜູ້ຕາງໜ້າ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກລ້ຽງ ຢູ່ສານປະຊາຊົນ ແລະ ສະຖານທີ່ອື່ນ;
6. ປະພຶດຕົນເປັນແບບຢ່າງທີ່ດີໃຫ້ແກ່ລູກລ້ຽງ;
7. ຕ້ອງຄຳນຶງເຖິງສິດ ແລະ ຜົນປະໂຫຍດສູງສຸດຂອງລູກລ້ຽງ;
8. ໃຫ້ສິດແກ່ເດັກ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
9. ລາຍງານສະພາບການເບິ່ງແຍງລ້ຽງດູເດັກ ໃຫ້ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດທຸກ ໜຶ່ງປີ. ໃນກໍລະນີມີການຍົກຍ້າຍບ່ອນຢູ່ອາໄສ ກໍຕ້ອງແຈ້ງ ທຸກຄັ້ງ ໃນກໍລະນີລູກລ້ຽງນັ້ນ ຍັງຖືສັນຊາດລາວ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 46 ຄວາມຮັບຜິດຊອບຂອງລູກລ້ຽງ**

ລູກລ້ຽງ ມີຄວາມຮັບຜິດຊອບ ບົນພື້ນຖານ ອາຍຸ ແລະ ຄວາມສາມາດ ໃນການຊ່ວຍເຫຼືອ ພໍ່ລ້ຽງ ແມ່ລ້ຽງ ທີ່ຕ້ອງການຄວາມຊ່ວຍເຫຼືອ, ເຄົາລົບສິດຂອງບຸກຄົນອື່ນ, ດຸໝັ່ນຮໍ່າຮຽນ, ຮັກສາສຸຂະພາບ, ຮັກບ້ານເກີດເມືອງນອນ ນັບຖືວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ.

ສໍາລັບລູກລ້ຽງທີ່ຖືສັນຊາດລາວ ນອກຈາກຄວາມຮັບຜິດຊອບ ທີ່ໄດ້ກໍານົດໄວ້ເທິງນີ້ ລູກລ້ຽງ ຍັງມີຄວາມຮັບຜິດຊອບ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

**ມາດຕາ 47 ສັນຊາດຂອງເດັກ**

ສັນຊາດຂອງເດັກ ທີ່ເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ຈະເສຍສັນຊາດລາວ ເມື່ອເດັກນັ້ນ ໄດ້ສັນຊາດຕາມ ພໍ່ລ້ຽງ ແມ່ລ້ຽງ.

ພໍ່ລ້ຽງ ແມ່ລ້ຽງ ທີ່ເປັນຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ໃຫ້ລາຍງານ ກ່ຽວກັບສັນຊາດຂອງເດັກ ຕໍ່ກະຊວງການຕ່າງປະເທດ, ສ່ວນພໍ່ລ້ຽງ ແມ່ລ້ຽງ ທີ່ເປັນຄົນຕ່າງປະເທດ ທີ່ອາໄສຢູ່ຕ່າງປະເທດ ໃຫ້ລາຍງານຕໍ່ຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງ ຂັ້ນສູນກາງ ໂດຍຜ່ານສໍານັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈໍາ ຢູ່ຕ່າງປະເທດ ພາຍໃນ ຫົກເດືອນ ນັບແຕ່ວັນມີການປ່ຽນແປງສັນຊາດຂອງລູກລ້ຽງ ເປັນຕົ້ນໄປ.

**ມາດຕາ 48 ການສິ້ນສຸດການເປັນລູກລ້ຽງ**

ການເປັນລູກລ້ຽງ ຈະສິ້ນສຸດ ກໍຕໍ່ເມື່ອມີຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ຮັບຮູ້ວ່າການເອົາເດັກເປັນລູກລ້ຽງນັ້ນ ເປັນໂມຄະ ຫຼື ມີການຖອນ ການເອົາເດັກເປັນລູກລ້ຽງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 206 ຂອງປະມວນກົດໝາຍແພ່ງ.

## ພາກທີ VI
## ຄະນະຮັບຜິດຊອບການພິຈາລະນາການເອົາເດັກເປັນລູກລ້ຽງ

**ມາດຕາ 49 ຄະນະຮັບຜິດຊອບການພິຈາລະນາການເອົາເດັກເປັນລູກລ້ຽງ**

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ແມ່ນ ການຈັດຕັ້ງທີ່ບໍ່ປະຈໍາການ ຊຶ່ງມີໜ້າທີ່ຄຸ້ມຄອງ ແລະ ພິຈາລະນາກ່ຽວກັບການເອົາເດັກເປັນລູກລ້ຽງ ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ໂດຍແມ່ນຂະແໜງການຍຸຕິທໍາ ເປັນເຈົ້າການປະສານສົມທົບ ກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ຄະນະຮັບຜິດຊອບດັ່ງກ່າວ ພິຈາລະນາການເອົາເດັກເປັນລູກລ້ຽງ ປະກອບດ້ວຍ ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ.

1. ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນສູນກາງ ໄດ້ຮັບການແຕ່ງຕັ້ງ ໂດຍລັດຖະມົນຕີກະຊວງຍຸຕິທໍາ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆ ດັ່ງນີ້:

1.1 ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ.

1.2 ກະຊວງຍຸຕິທໍາ;

1.3 ກະຊວງການຕ່າງປະເທດ;

1.4 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;

1.5 ກະຊວງສາທາລະນະສຸກ;

1.6 ກະຊວງປ້ອງກັນຄວາມສະຫງົບ;

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນສູນກາງ ຖືເອົາກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເປັນກອງເລຂາຊ່ວຍວຽກ.

2. ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນແຂວງ ໄດ້ຮັບການແຕ່ງຕັ້ງໂດຍ ຄະນະກຳມະການປົກຄອງຂັ້ນແຂວງ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆ ດັ່ງນີ້:

2.1 ຄະນະກຳມະການປົກຄອງ ຂັ້ນແຂວງ;

2.2 ພະແນກຍຸຕິທຳ ຂັ້ນແຂວງ;

2.3 ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ;

2.4 ພະແນກສາທາລະນະສຸກ ຂັ້ນແຂວງ;

2.5 ພະແນກພົວພັນຕ່າງປະເທດ ຂັ້ນແຂວງ;

2.6 ກອງບັນຊາການ ປ້ອງກັນຄວາມສະຫງົບ ຂັ້ນແຂວງ.

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນແຂວງ ຖືເອົາພະແນກຍຸຕິທຳ ເປັນກອງເລຂາຊ່ວຍວຽກ.

3. ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນເມືອງ ໄດ້ຮັບການແຕ່ງຕັ້ງໂດຍ ຄະນະກຳມະການປົກຄອງຂັ້ນເມືອງ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆ ດັ່ງນີ້:

3.1 ຄະນະກຳມະການປົກຄອງ ຂັ້ນເມືອງ;

3.2 ຫ້ອງການຍຸຕິທຳ ຂັ້ນເມືອງ;

3.3 ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ;

3.4 ຫ້ອງການສາທາລະນະສຸກ ຂັ້ນເມືອງ;

3.5 ກອງບັນຊາການ ປ້ອງກັນຄວາມສະຫງົບ ຂັ້ນເມືອງ.

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນເມືອງ ຖືເອົາຫ້ອງການຍຸຕິທຳເມືອງ ເປັນກອງເລຂາຊ່ວຍວຽກ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບຂັ້ນສູນກາງ**

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນສູນກາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາຄຳຮ້ອງ ແລະ ກວດກາເງື່ອນໄຂ, ປະຫວັດການເຄື່ອນໄຫວ, ຄຸນສົມບັດ ແລະ ຄວາມອາດສາມາດຂອງຜູ້ຮ້ອງຂໍ;

2. ຊີ້ນຳ, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ຂອງຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນແຂວງ;

3. ປະເມີນຜົນ, ໃຫ້ຄຳປຶກສາ ກ່ຽວກັບວຽກງານການເອົາເດັກເປັນລູກລ້ຽງ;

4. ແຈ້ງຕອບຜົນຂອງການພິຈາລະນາຄຳຮ້ອງຂໍເອົາເດັກເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ;

5. ສັງລວມສະຖິຕິເດັກທີ່ຂາດການເບິ່ງແຍງລ້ຽງດູ ແລະ ຮັກສາຄວາມລັບກ່ຽວກັບເດັກ ແລະ ຄອບຄົວ;

6. ພິຈາລະນາ ແລະ ອະນຸຍາດໃຫ້ທົດລອງຈັດກັບເດັກເຂົ້າກັບຄອບຄົວໃໝ່;

7. ລະດົມການຊ່ວຍເຫຼືອຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

8. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ຕໍ່ກະຊວງຍຸຕິທຳ ແລະ ລັດຖະບານ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບຂັ້ນແຂວງ**

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານ ຂອງຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນເມືອງ;

2. ປະເມີນຜົນ, ໃຫ້ຄຳປຶກສາຄອບຄົວ ແລະ ເດັກ ທີ່ຈະໄປເປັນລູກລ້ຽງ;

3. ຕິດຕາມການທົດລອງຈັດໃຫ້ເດັກເຂົ້າກັບຄອບຄົວໃໝ່;

4. ສັງລວມສະຖິຕິເດັກທີ່ຂາດການເບິ່ງແຍງລ້ຽງດູ ແລະ ຮັກສາຄວາມລັບກ່ຽວກັບເດັກ ແລະ ຄອບຄົວ;

5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ;

6. ລະດົມການຊ່ວຍເຫຼືອຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນແຂວງ, ນະຄອນຫຼວງ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ຕໍ່ຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ແລະ ກະຊວງຍຸຕິທຳ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບຂັ້ນເມືອງ**

ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຄຳຮ້ອງ ແລະ ກວດກາເງື່ອນໄຂ, ປະຫວັດການເຄື່ອນໄຫວ, ຄຸນສົມບັດ ແລະ ຄວາມອາດສາມາດຂອງຜູ້ຮ້ອງຂໍ;

2. ຕິດຕາມ ກວດກາ, ປະເມີນ ແລະ ໃຫ້ຄຳປຶກສາກ່ຽວກັບການເອົາເດັກເປັນລູກລ້ຽງ, ການເບິ່ງແຍງລ້ຽງດູ ແລະ ສິດ ຂອງເດັກ;

3. ສັງລວມສະຖິຕິເດັກທີ່ຂາດການເບິ່ງແຍງລ້ຽງດູ ແລະ ຮັກສາຄວາມລັບກ່ຽວກັບເດັກ ແລະ ຄອບຄົວ;

4. ພິຈາລະນາ ແລະ ອະນຸຍາດໃຫ້ທົດລອງຈັດເດັກເຂົ້າກັບຄອບຄົວໃໝ່;

5. ລະດົມການຊ່ວຍເຫຼືອຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ເມືອງ, ນະຄອນ;

6. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານການເອົາເດັກໄປເປັນລູກລ້ຽງ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ຕໍ່ຄະນະກຳມະການປົກຄອງເມືອງ, ນະຄອນ ແລະ ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນແຂວງ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 53 ຂໍ້ຫ້າມ ທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ເອົາເດັກໄປລ້ຽງ ຫຼື ເບິ່ງແຍງລ້ຽງດູເດັກ ເພື່ອລໍຖ້າການເອົາໄປເປັນລູກລ້ຽງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ເອົາເດັກມາເປັນລູກລ້ຽງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

3. ເປີດເຜີຍຄວາມລັບ ກ່ຽວກັບການເປັນລູກລ້ຽງ ໂດຍບໍ່ໄດ້ຮັບການເຫັນດີ ຈາກພໍ່ລ້ຽງ ແມ່ລ້ຽງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;

4. ບໍ່ໃຫ້ການຮ່ວມມື, ຂັດຂວາງ ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານການເອົາເດັກເປັນລູກລ້ຽງ;

5. ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ ລວມທັງການໃຫ້ສິນບົນ;

6. ປອມແປງເອກະສານ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ກ່ຽວກັບການເອົາເດັກເປັນລູກລ້ຽງ ລວມທັງການສົມຮູ້ຮ່ວມຄິດປອມແປງເອກະສານ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 54 ຂໍ້ຫ້າມ ສໍາລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ພິຈາລະນາການເອົາເດັກເປັນລູກລ້ຽງ ໂດຍບໍ່ຜ່ານຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ຄອບຄົວຂອງຕົນ;

3.ເປັນສື່ກາງໃນການ ໃຫ້ ຫຼື ຮັບ ສິນບົນ ລວມທັງການໃຫ້ສິນບົນ ແກ່ພະນັກງານທີ່ຮັບຜິດຊອບວຽກງານການເອົາເດັກເປັນລູກລ້ຽງ;

4. ກົດໜ່ວງ, ຖ່ວງດຶງ, ຊຸກເຊື່ອງ ແລະ ທຳລາຍ ເອກະສານກ່ຽວກັບການເອົາເດັກເປັນລູກລ້ຽງ;

5. ການຕົກລົງຊັກຊ້າ ຊຶ່ງພາໃຫ້ມີຜົນກະທົບຕໍ່ສິດ ແລະ ຜົນປະໂຫຍດສູງສຸດຂອງເດັກ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 55 ຂໍ້ຫ້າມ ສໍາລັບ ພໍ່ລ້ຽງ ແມ່ລ້ຽງ**

ຫ້າມ ພໍ່ລ້ຽງ ແມ່ລ້ຽງ ມີ ພຶດຕິກຳ ດັ່ງນີ້:

1. ຂໍເອົາເດັກເປັນລູກລ້ຽງ ເກີນ ສາມຄົນ ;

2. ປ່ອຍປະລະເລີຍລູກລ້ຽງ, ບໍ່ເອົາໃຈໃສ່ເບິ່ງແຍງລ້ຽງດູລູກລ້ຽງ;

3. ມອບລູກລ້ຽງໃຫ້ບຸກຄົນອື່ນ ເພື່ອຜົນປະໂຫຍດຂອງຕົນ;

4. ໃຊ້ຄວາມຮຸນແຮງ ທາງດ້ານຮ່າງກາຍ, ຈິດໃຈ ແລະ ທາງເພດຕໍ່ລູກລ້ຽງ;

5. ຈຳແນກ ລະຫວ່າງ ລູກລ້ຽງ ກັບ ລູກຄີງ;

6. ໃຫ້ສິນບົນ ແກ່ພະນັກງານທີ່ຮັບຜິດຊອບວຽກງານການເອົາເດັກເປັນລູກລ້ຽງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 56 ຂໍ້ຫ້າມສໍາລັບ ພໍ່ຄີງ ແມ່ຄີງ, ຄອບຄົວ, ຍາດພີ່ນ້ອງ ຂອງເດັກ**

ຫ້າມ ພໍ່ຄີງ ແມ່ຄີງ, ຄອບຄົວ, ຍາດພີ່ນ້ອງ ຂອງເດັກ ມີ ພຶດຕິກຳ ດັ່ງນີ້:

1. ມອບລູກໃຫ້ບຸກຄົນອື່ນ ເພື່ອຜົນປະໂຫຍດຂອງຕົນ;

2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບເດັກ;

3. ເປີດເຜີຍຄວາມລັບ ການເປັນລູກລ້ຽງ, ຕິດຕໍ່ພົວພັນກັບເດັກໂດຍບໍ່ຮັບການເຫັນດີຈາກ ພໍ່ລ້ຽງ ແມ່ລ້ຽງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;

4. ເຫັນດີໃຫ້ລູກຂອງຕົນ ເປັນລູກລ້ຽງກ່ອນການເກີດ ແລະ ຫຼັງການເກີດ ຫົກອາທິດ;

5. ເອົາເດັກມາລ້ຽງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

6. ເອົາເດັກມາລ້ຽງ ເພື່ອລໍຖ້າໃຫ້ເປັນລູກລ້ຽງ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ກວດກາວຽກງານການເອົາເດັກເປັນລູກລ້ຽງ

**ມາດຕາ 57 ອົງການຄຸ້ມຄອງ ແລະ ກວດກາ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານການເອົາເດັກເປັນລູກລ້ຽງ ປະກອບດ້ວຍ:

1. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
2. ຂະແໜງການຍຸຕິທຳ;
3. ຂະແໜງການ ການຕ່າງປະເທດ;
4. ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ;
5. ຂະແໜງການສາທາລະນະສຸກ;
6. ຂະແໜງການປ້ອງກັນຄວາມສະຫງົບ;

ມອບໃຫ້ຂະແໜງການຍຸຕິທຳ ເປັນໃຈກາງໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານການເອົາເດັກໄປເປັນລູກລ້ຽງ.

**ມາດຕາ 58 ສິດ ແລະ ໜ້າທີ່ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ໃນການຄຸ້ມຄອງ ວຽກງານການເອົາເດັກໄປເປັນລູກລ້ຽງ ຫ້ອງວ່າການສຳນັກງານຍາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສຳນວນຄຳຮ້ອງຂໍເອົາເດັກໄປເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ຕາມການສະເໜີ ຂອງກະຊວງຍຸຕິທຳ ເພື່ອນຳສະເໜີນາຍົກລັດຖະມົນຕີ ພິຈາລະນາ;
2. ອອກແຈ້ງການກ່ຽວກັບການອະນຸຍາດໃຫ້ເດັກເປັນລູກລ້ຽງ ໄປຍັງກະຊວງຍຸຕິທຳ ເພື່ອຈົດທະບຽນ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການເອົາເດັກໄປເປັນລູກລ້ຽງ;
4. ຕິດຕາມ, ຊຸກຍູ້ ແລະ ສັງລວມຂໍ້ມູນ ກ່ຽວກັບການເອົາເດັກເປັນລູກລ້ຽງໃນຂອບເຂດທົ່ວປະເທດ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 ສິດ ແລະ ໜ້າທີ່ຂອງຂະແໜງການຍຸຕິທຳ**

ໃນການຄຸ້ມຄອງ ວຽກງານການເອົາເດັກເປັນລູກລ້ຽງ ຂະແໜງການຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

**ກະຊວງຍຸຕິທຳ:**

1. ສ້າງແຜນການເຄື່ອນໄຫວວຽກງານກ່ຽວກັບການເອົາເດັກເປັນລູກລ້ຽງ ໃນຂອບເຂດທົ່ວປະເທດ;
2. ແຕ່ງຕັ້ງຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນສູນກາງ ເພື່ອຄົ້ນຄ້ວາກ່ຽວກັບການຂໍເອົາເດັກໄປເປັນລູກລ້ຽງ;
3. ຮັບ ແລະ ກວດກາ ຄຳຮ້ອງຂໍເອົາເດັກເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ;
4. ຊີ້ນຳ ພະແນກຍຸຕິທຳຂັ້ນແຂວງ ກ່ຽວກັບການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ;
5. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຊອກຫາຄອບຄົວທີ່ເໝາະສົມໃຫ້ເດັກໄປເປັນລູກລ້ຽງ;
6. ສ້າງ ແລະ ເກັບຮັກສາບັນຊີເດັກທີ່ສາມາດໃຫ້ເປັນລູກລ້ຽງ ແລະ ພໍ່ລ້ຽງ ແມ່ລ້ຽງ ຄົນຕ່າງດ້າວ, ຄົນຕ່າງປະເທດ;
7. ສະເໜີຕໍ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບການເອົາເດັກເປັນລູກລ້ຽງ;

8. ຈົດທະບຽນກ່ຽວກັບການເອົາເດັກເປັນລູກລ້ຽງ ຂອງຄົນຕ່າງດ້າວ ແລະ ຄົນຕ່າງປະເທດ;

9. ສັງລວມສະຖິຕິ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ພະແນກຍຸຕິທຳ ຂັ້ນແຂວງ:**

1. ສ້າງແຜນການເຄື່ອນໄຫວວຽກງານກ່ຽວກັບການເອົາເດັກເປັນລູກລ້ຽງ ພາຍໃນ ນະຄອນຫຼວງ, ແຂວງ;

2. ສະເໜີຄະນະກຳມະການປົກຄອງ ຂັ້ນແຂວງ ແຕ່ງຕັ້ງຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງຂັ້ນແຂວງ;

3. ຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ;

4. ປະສານສົມທົບກັບ ອົງການ, ພະແນກການ ຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ເພື່ອຊອກຫາຄອບຄົວທີ່ເໝາະສົມໃຫ້ເດັກເປັນລູກລ້ຽງ ພາຍໃນ ນະຄອນຫຼວງ, ແຂວງ;

5. ແຈ້ງກະຊວງຍຸຕິທຳ ກ່ຽວກັບເດັກທີ່ສາມາດຮັບເປັນລູກລ້ຽງ ແລະ ຜູ້ຮ້ອງຂໍທີ່ມີເງື່ອນໄຂຮັບເອົາເດັກເປັນລູກລ້ຽງ;

6. ສັງລວມ ສະຖິຕິ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ຕໍ່ກະຊວງຍຸຕິທຳ ແລະ ຄະນະກຳການປົກຄອງ ນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ຫ້ອງການຍຸຕິທຳ ຂັ້ນເມືອງ:**

1. ສ້າງແຜນການເຄື່ອນໄຫວວຽກງານ ກ່ຽວກັບການເອົາເດັກໄປເປັນລູກລ້ຽງ ພາຍໃນ ເມືອງ, ນະຄອນ;

2. ສະເໜີ ຄະນະກຳມະການປົກຄອງ ເມືອງ, ນະຄອນ ແຕ່ງຕັ້ງຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນເມືອງ;

3. ຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການເອົາເດັກເປັນລູກລ້ຽງໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ປະສານສົມທົບກັບອົງການ, ຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ;

5. ສ້າງ ແລະ ເກັບຮັກສາບັນຊີເດັກ ທີ່ສາມາດຮັບເປັນລູກລ້ຽງ ແລະ ພໍ່ລ້ຽງ ແມ່ລ້ຽງ ທີ່ເປັນພົນລະເມືອງລາວ;

6. ແຈ້ງພະແນກຍຸຕິທຳ ຂັ້ນແຂວງ ກ່ຽວກັບເດັກທີ່ສາມາດຮັບເປັນລູກລ້ຽງ ແລະ ຜູ້ຮ້ອງຂໍທີ່ມີເງື່ອນໄຂຮັບເດັກໄປເປັນລູກລ້ຽງ;

7. ຈົດທະບຽນການຂໍເອົາເດັກເປັນລູກລ້ຽງ ຂອງພົນລະເມືອງລາວ ດ້ວຍກັນ;

8. ເກັບກຳສະຖິຕິ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ ຕໍ່ພະແນກຍຸຕິທຳ ຂັ້ນແຂວງ ແລະ ຄະນະກຳມະການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 ສິດ ແລະ ໜ້າທີ່ຂອງຂະແໜງການ ການຕ່າງປະເທດ**

ໃນການຄຸ້ມຄອງ ວຽກງານການເອົາເດັກເປັນລູກລ້ຽງ ຂະແໜງການ ການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

**ກະຊວງການຕ່າງປະເທດ:**

1. ອອກຄໍາແນະນໍາໃຫ້ສໍານັກງານຜູ້ຕາງໜ້າ ສປປ ລາວ ຢູ່ຕ່າງປະເທດ ຕິດຕາມ ກວດກາ ແລະ ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ຂອງປະເທດຜູ້ຮ້ອງຂໍເດັກ ເພື່ອລາຍງານສະພາບຂອງເດັກໃນການທົດລອງລ້ຽງດູ ຫຼື ເດັກທີ່ໄດ້ຮັບອະນຸຍາດໃຫ້ເປັນລູກລ້ຽງ ຂອງຄົນຕ່າງປະເທດແລ້ວ;

2. ກວດກາເອກະສານກ່ຽວກັບການເອົາເດັກເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ, ຄົນຕ່າງປະເທດ ທີ່ອາໄສຢູ່ຕ່າງປະເທດ ທີ່ສໍານັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ຢູ່ຕ່າງປະເທດ ສົ່ງມາ ແລ້ວມີຄໍາເຫັນເປັນລາຍລັກອັກສອນ ສົ່ງໃຫ້ ກະຊວງຍຸຕິທໍາ;

3. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ;

4. ອອກໜັງສືຜ່ານແດນໃຫ້ເດັກ ເພື່ອເດີນທາງໄປຕ່າງປະເທດ ຕາມການຕົກລົງເຫັນດີຂອງຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງ ຂັ້ນສູນກາງ ໃນກໍລະນີທົດລອງຈັດເດັກໃຫ້ເຂົ້າກັບຄອບຄົວໃໝ່ ຢູ່ຕ່າງປະເທດ ຫຼື ພາຍຫຼັງການຈົດທະບຽນການເອົາເດັກເປັນລູກລ້ຽງ;

5. ລາຍງານສະພາບຂອງເດັກ ທີ່ໄດ້ອະນຸຍາດໃຫ້ເປັນລູກລ້ຽງ ຂອງຄົນຕ່າງປະເທດ ທີ່ຢູ່ຕ່າງປະເທດຕໍ່ລັດຖະບານ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ພະແນກການຕ່າງປະເທດ:**

1. ຄົ້ນຄວ້າ ແລະ ມີຄໍາເຫັນກ່ຽວກັບ ການເອົາເດັກໄປເປັນລູກລ້ຽງຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ອາໄສຢູ່ ນະຄອນຫຼວງ, ແຂວງ ຕາມການມອບໝາຍ;

2. ຕິດຕາມ, ປະສານສົມທົບກັບອົງການ, ພະແນກການຂັ້ນແຂວງ ເພື່ອລາຍງານສະພາບຂອງເດັກໃນການຈັບຄູ່ເດັກ ກັບຜູ້ຮ້ອງຂໍ, ການທົດລອງໃຫ້ເດັກ ເຂົ້າກັບຄອບຄົວໃໝ່ ຂອງຄົນຕ່າງດ້າວ,ຄົນຕ່າງປະເທດ ທີ່ອາໄສຢູ່ ນະຄອນຫຼວງ, ແຂວງ ຕາມການມອບໝາຍ;

3. ໃຫ້ການຊ່ວຍເຫຼືອເດັກທີ່ເອົາໄປເປັນລູກລ້ຽງ ໃນກໍລະນີຖືກລະເມີດສິດ ຫຼື ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ, ການຄ້າມະນຸດ ແລະ ການລະເມີດອື່ນ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຄຸ້ມຄອງ ວຽກງານການເອົາເດັກເປັນລູກລ້ຽງ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກໍາສະຖິຕິ ແລະ ລາຍງານ ກ່ຽວກັບເດັກທີ່ຂາດການເບິ່ງແຍງລ້ຽງດູ ຕໍ່ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ ຕາມແຕ່ລະກໍລະນີ ເພື່ອໃຫ້ການປົກປ້ອງ, ຊ່ວຍເຫຼືອເດັກ ແລະ ຈັດເຂົ້າບັນຊີເດັກເປັນລູກລ້ຽງ;

2. ເປັນເຈົ້າການໃນການປະສານສົມທົບກັບ ຄະນະຮັບຜິດຊອບພິຈາລະນາການເອົາເດັກເປັນລູກລ້ຽງ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການໃຫ້ຄໍາປຶກສາ, ການປະເມີນ, ການຊອກທາງເລືອກໃນການເບິ່ງແຍງລ້ຽງດູທີ່ເໝາະສົມໃຫ້ແກ່ເດັກທີ່ຂາດການເບິ່ງແຍງລ້ຽງດູ;

3. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງຂະແໜງການສາທາລະນະສຸກ**

ໃນການຄຸ້ມຄອງ ວຽກງານການເອົາເດັກເປັນລູກລ້ຽງ ຂະແໜງການສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກໃບແຈ້ງເກີດໃຫ້ເດັກ;
2. ໃຫ້ການຊ່ວຍເຫຼືອເບື້ອງຕົ້ນ ໃນກໍລະນີ ເດັກເກີດຢູ່ໂຮງໝໍ, ພໍ່ແມ່ບໍ່ລ້ຽງດູເດັກ ພ້ອມທັງແຈ້ງ ແລະ ປະສານສົມທົບກັບຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຊອກຫາທາງເລືອກໃນການເບິ່ງແຍງລ້ຽງດູທີ່ເໝາະສົມສໍາລັບເດັກ;
3. ເກັບກໍາຈໍານວນເດັກທີ່ເກີດຢູ່ໂຮງໝໍ ສູນກາງ, ແຂວງ, ເມືອງ ຫຼື ຊຸມຊົນ ແລະ ສຸກສາລາ ຊຶ່ງພໍ່ແມ່ບໍ່ລ້ຽງດູ;
4. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງ ວຽກງານການເອົາເດັກເປັນລູກລ້ຽງ ຂະແໜງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກໃບຢັ້ງຢືນການເກີດໃຫ້ເດັກ;
2. ກວດກາ ແລະ ມີຄໍາເຫັນ ກ່ຽວກັບປະຫວັດການເຄື່ອນໄຫວຂອງຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ;
3. ຈົດທະບຽນການປ່ຽນ ຊື່ ແລະ/ຫຼື ນາມສະກຸນຂອງເດັກ ຕາມການສະເໜີ ຂອງພໍ່ລ້ຽງ ແມ່ລ້ຽງ;
4. ຈົດທະບຽນສໍາມະໂນຄົວເດັກ ເຂົ້າກັບຄອບຄົວ ຂອງພໍ່ລ້ຽງ ແມ່ລ້ຽງ ພາຍຫຼັງການຈົດທະບຽນການເອົາເດັກເປັນລູກລ້ຽງ;
5. ໃຫ້ການຊ່ວຍເຫຼືອເດັກທີ່ຖືກລະເມີດ ສິດ ແລະ ເປັນຜູ້ຖືກເຄາະຮ້າຍ;
6. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານການເອົາເດັກເປັນລູກລ້ຽງ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບ ອົງການຄຸ້ມຄອງ ແລະ ກວດກາ ວຽກງານການເອົາເດັກໄປເປັນລູກລ້ຽງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານການເອົາເດັກເປັນລູກລ້ຽງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ພາກທີ IX
## ຄ່າທໍານຽມ ແລະ ຄ່າບໍລິການ

**ມາດຕາ 65 ຄ່າທໍານຽມ**

ຄ່າທໍານຽມ ແມ່ນ ຄ່າສິດຄຸ້ມຄອງບໍລິຫານລັດທີ່ເກັບຈາກບຸກຄົນ ທີ່ຍື່ນຄໍາຮ້ອງເອົາຂໍເອົາເດັກເປັນລູກລ້ຽງ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້.

ການເສຍຄ່າທໍານຽມ ໃຫ້ເສຍຢູ່ບ່ອນທີ່ຍື່ນຄໍາຮ້ອງ ສ່ວນການເກັບ ແລະ ອັດຕາຄ່າທໍານຽມ ໃຫ້ປະຕິບັດຕາມລະບຽບການກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 66 ຄ່າບໍລິການ**

ຄ່າບໍລິການ ແມ່ນ ຄ່າບໍລິການດ້ານວິຊາການ ກ່ຽວກັບການຂໍເອົາເດັກເປັນລູກລ້ຽງ ທີ່ເກັບຈາກບຸກຄົນ ທີ່ຍື່ນຄຳຮ້ອງຂໍເອົາເດັກເປັນລູກລ້ຽງ ເພື່ອເປັນການຊ່ວຍໝູນການໃຊ້ຈ່າຍງົບປະມານ ຂອງລັດ.

ການເສຍຄ່າບໍລິການ ໃຫ້ເສຍຢູ່ບ່ອນຍື່ນຄຳຮ້ອງ ສ່ວນການເກັບ ແລະ ອັດຕາຄ່າບໍລິການ ໃຫ້ປະຕິບັດຕາມລະບຽບການກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 67 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຊອກທາງເລືອກໃຫ້ເດັກໄດ້ຮັບຜົນປະໂຫຍດສູງສຸດ, ການປົກປ້ອງ ແລະ ຊ່ວຍເຫຼືອເດັກທີ່ເປັນລູກລ້ຽງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 68 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບການ ກ່ຽວກັບການເອົາເດັກເປັນລູກລ້ຽງ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ເປັນຕົ້ນ ການໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ, ກົດໜ່ວງ, ຖ່ວງດຶງເອກະສານ, ການ ໃຫ້ ຫຼື ຮັບສິນບົນ ຫຼື ມີການກະທຳອື່ນທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ ລັດ, ສັງຄົມ ຫຼື ບຸກຄົນອື່ນ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ຖືກດຳເນີນຄະດີຕາມກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 69 ການຈັດຕັ້ງປະຕິບັດ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້.

**ມາດຕາ 70 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 31 ຕຸລາ 2025 ແລະ ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**